# ມັດທາຍ

ໃຈຄວາມສຳຄັນ ອານາຈັກແຫ່ງຟ້າສວັນ

ຈຳນວນບົດ ໒໘ ບົດ

ໜັງສືມັດທາຍເປັນສື່ລະຫວ່າງພຣະຄັມພີເດີມກັບພຣະຄັມພີໃໝ່ ຄື ເປັນເໝືອນໂຄມໄຟທີ່ໄດ້ໃຫ້ທັງສອງຝ່າຍເຫັນຮຸ່ງ ສນັ້ນເພິ່ນຈຶ່ງເຫັນດີ ເອົາໜັງສືນີ້ເປັນເຫລັ້ມຕົ້ນຂອງພຣະຄັມພີໃໝ່

ໃນໜັງສືນີ້ໄດ້ເວົ້າເຖິງອົງຕະກູນຂອງພຣະເຢຊູວ່າ

ກ. ພຣະເຢຊູເປັນເຊື້ອສາຍດຽວກັນກັບກະສັດດາວິດ ຕາມພຣະເຈົ້າໄດ້ຊົງສັນຍາໄວ້ກັບກະສັດດາວິດນັ້ນ

ຂ. ພຣະເຈົ້າໄດ້ຊົງສັນຍາໄວ້ກັບທ່ານອັບລາຮາມວ່າ ຄຳສັນຍານັ້ນຈະໄດ້ສຳເຣັດໃນພຣະເຢຊູ

## ວ່າດ້ວຍຜູ້ແຕ່ງ

ທ່ານມັດທາຍຜູ້ໄດ້ແຕ່ງໜັງສືນີ້ກໍເປັນສາວົກຄົນນຶ່ງໃນສາວົກ ໑໒ ຄົນນັ້ນ ມັດທາຍ ໑໑:໑-໔ ເມື່ອກ່ອນເພິ່ນເປັນຄົນເກັບພາສີຂອງພວກຊາວໂຣມ ຊື່ເດີມຂອງເພິ່ນວ່າ "ເລວີ" ລູກາ ໕:໒໗ ເມື່ອພຣະເຢຊູຊົງເອີ້ນໃຫ້ຕາມພຣະອົງໄປ ເພິ່ນປະງານອາຊີບຂອງເພິ່ນຕາມພຣະອົງໄປໃນທັນທີ (ມັດທາຍ ໙:໙) ຫລັງຈາກນັ້ນເພິ່ນໄດ້ປ່ຽນຊື່ໃໝ່ວ່າ "ມັດທາຍ" ແປວ່າ ຂອງປະທານມາຈາກພຣະເຈົ້າ ກ່ອນທ່ານມັດທາຍ

ຈະຈາກເພື່ອນຝູງຕິດຕາມພຣະເຢຊູໄປ ເພິ່ນໄດ້ເຊີນພຣະເຢຊູມາຮອມຮັບປະທານອາຫານພ້ອມກັບເພື່ອນຝູງຂອງຕົນ ເພື່ອຈະໄດ້ແນະນຳໃຫ້ເພື່ອນຝູງຮູ້ຈັກພຣະເຢຊູຜູ້ເປັນນາຍໃໝ່ຂອງຕົນ ຕາມເຣື່ອງພົງສາວະ-ດານ ບອກວ່າ ທ່ານ ມັດທາຍ ໄດ້ ປະກາດ ຂ່າວ ປະເສີດ ຢູ່ກຸງ ເຢຣູ ຊາເລັມ ປະມານ ໑໕ ປີ ຫລັງຈາກນັ້ນເພິ່ນໄດ້ໄປປ່າວປະກາດໃນທ່າມກາງຊາວຕ່າງປະເທດ

## ຄວາມມຸ່ງໝາຍ

ທ່ານມັດທາຍໄດ້ຂຽນໄປເຖິງພວກຢູດາບອກວ່າ ພຣະເຢຊູແມ່ນອົງພຣະຄຣິດຜູ້ທີ່ພຣະເຈົ້າໄດ້ຊົງເລືອກໄວ້ ຕາມຄຳສັນຍາຂອງພຣະເຈົ້າກັບຄຳທຳນວາຍໃນພຣະຄັມພີເດີມກໍຈະສຳເຣັດໃນພຣະອົງນັ້ນ "ເພື່ອຄຳຂອງຜູ້ທຳນວາຍຈະເຖິງທີ່ສຳເຣັດ" ຂໍ້ຄວາມນີ້ທ່ານມັດທາຍໄດ້ຂຽນໄວ້ເຖິງ ໑໔ ເທື່ອ ທ່ານມັດທາຍໄດ້ສະແດງວ່າພຣະເຢຊູຊາວເມືອງນາຊາເຣັດນັ້ນແມ່ນອົງກະສັດທີ່ແທ້ຈິງຂອງພວກຢູດາ ພຣະອົງໄດ້ສະເດັດມາຈັດຕັ້ງອານາຈັກໄວ້ ແຕ່ບໍ່ແມ່ນຈັດຕັ້ງຢ່າງອານາຈັກຂອງຊາວໂລກ ຫາກແຕ່ເປັນອານາຈັກດ້ານຈິດວິນຍານ "ອານາຈັກແຫ່ງຟ້າສວັນ" ຂໍ້ຄວາມນີ້ທ່ານມັດທາຍໄດ້ຂຽນໄວ້ເຖິງ ໓໗ ເທື່ອ ສ່ວນພົງສີມາຣະໂກແລະລູກາບໍ່ໄດ້ຂຽນໄວ້ເລີຍ ພຽງແຕ່ຄຳວ່າ "ອານາຈັກ" ຫລື "ແຜ່ນດິນ" ທີ່ທ່ານມັດທາຍກໍຂຽນໄວ້ເຖິງ ໕໕ ເທື່ອ ມີຄຳອຸປມາຫລາຍຢ່າງທີ່ເວົ້າເຖິງອານາຈັກຂອງສວັນ

## ເນື້ອຄວາມ

ທ່ານມັດທາຍ ບໍ່ໄດ້ເລົ່າເຫດການ ແລະພາລະກິດ ຂອງພຣະອົງໄວ້ຕາມລຳດັບ ສ່ວນຫລາຍແລ້ວເພິ່ນໄດ້ຂຽນແຕ່ຄຳເທສນາເຣື່ອງອານາຈັກແຫ່ງຟ້າສວັນຕອນລຳດັບໄວ້ ສັນນັ້ນໜັງສືມັດທາຍຈຶ່ງປຽບເໝືອນກັບເຮືອນຫລັງນຶ່ງ ຄືຕາມທັມະດາແລ້ວເຮືອນແຕ່ລະຫລັງຕ້ອງມີຫົວ ມີເສົາມີຫລັງແລະມີເຄື່ອງຕ່າງໆ

໑. ຫົວ ຄືເຣື່ອງເຊື້ອວົງ ເຣື່ອງເກີດແລະເຣື່ອງຕ່າງໆ ຂອງພຣະເຢຊູ ບົດ ໑–໔

໒. ເສົາ ຄືຄຳເທສນາເຣື່ອງອານາຈັກແຫ່ງຟ້າສວັນ ຊຶ່ງພຣະເຢຊູຊົງສະແດງເຖິງທຸກຄັ້ງ ບົດ ໕–໒໕

໓. ຫລັງ ມີຢູ່ທ້າຍສຸດຂອງໜັງສືຄືເຣື່ອງທໍຣະມານ ເຣື່ອງຕາຍທີ່ໄມ້ກາງແຂນ ເຣື່ອງກັບຄືນຈາກຄວາມຕາຍ ແລະຄຳສັ່ງຄັ້ງສຸດທ້າຍຂອງພຣະເຢຊູ ບົດ ໒໖–໒໘

໔. ເຄື່ອງຕ່າງໆ ມີຢູ່ໃນຄຳເທສນາຄືຄຳນຳ ຄຳອະທິບາຍ ຄຳສົນທະນາກັບພວກຟາຣີຊຽນ ຫລືການອັສຈັນຕ່າງໆ ທີ່ພຣະເຢຊູຊົງກະທຳ

### ຄຳເທສນາຫ້າຫລັກຄືດັ່ງນີ້ :

໑. ຄຳເທສນາທີ່ພູເຂົາ ເຣື່ອງຂັນຍົດແລະຂໍ້ດຳຣົງ ເຣື່ອງອານາຈັກ ບົດ ໕–໗

໒. ຄຳເທສນາເຣື່ອງໜ້າທີ່ຜູ້ເປັນຂ້າໃຊ້ຂອງອານາຈັກ ບົດ ໑໐

໓. ຄຳອຸປມາເຈັດເຣື່ອງ ຊຶ່ງສແດງວ່າອານາຈັກຈະເຣີມຂຶ້ນໄດ້ຢ່າງໃດ ບົດ ໑໓

໔. ຄຳເທສນາວ່າດ້ວຍຈຳພວກຂອງອານາຈັກ ຄືຄຣິສຕະຈັກ ບົດ ໑໘

໕. ຄຳເທສນາກ່ຽວກັບຜູ້ເປັນສັດຊື່ຕໍ່ອານາຈັກ ຄືມອງກລມຮູມກັບ ຟາຣິຊຽນ ບົດ ໑໗

໖. ຄຳພະຍາກອນ ຄັ້ງສຸດທ້າຍ ຄືເມື່ອເວລາ ອານາຈັກ ຈະເຖິງທີ່ສຳເຣັດ ບົດ ໒໔-໒໕

# ເຣື່ອງຕ່າງ ໆ ທີ່ມີຢູ່ໃນໜັງສືມັດທາຍ

ເຣື່ອງຕໍ່ໄປນີ້ມີຢູ່ແຕ່ສະເພາະໃນໜັງສືມັດທາຍເທົ່ານັ້ນ

໑. ສິ່ງຕ່າງ ໆ ທີ່ສະແດງເຖິງສະພາບ ເປັນກະສັດຂອງພຣະເຢຊູ

| | |
|---|---|
| – ເຊື້ອວົງຂອງພຣະເຢຊູ | ບົດ ໑:໑ (ອ່ານກິຈການ ໑໓:໒໒–໒໓) |
| – ພວກນັກປາດມາແຕ່ທິດຕາເວັນອອກ | ບົດ ໒:໑–໑໒ |
| – ການໜີໄປປະເທດເອຢິບ | ບົດ ໒:໑໓–໑໕ |
| – ການຂ້າພວກເດັກນ້ອຍ | ບົດ ໒:໑໖–໑໘ |

໒. ຄຳອຸປມາ ໑໑ ເຣື່ອງ

| | |
|---|---|
| – ວ່າດ້ວຍອາຫານນົກ (ເຂົ້ານົກ) | ບົດ ໑໓:໒໔–໓໐ |
| – ວ່າດ້ວຍຂອງແພງ | ບົດ ໑໓:໔໔ |
| – ວ່າດ້ວຍແກ້ວຫອຍອັນດີ | ບົດ ໑໓:໔໕ |
| – ວ່າດ້ວຍມອງໃຫຍ່ | ບົດ ໑໓:໔໗–໕໐ |
| – ວ່າດ້ວຍຄົນໃຊ້ບໍ່ມີໃຈສົງເວດ | ບົດ ໑໘:໒໓–໓໕ |
| – ວ່າດ້ວຍການຈ້າງພວກຄົນງານ | ບົດ ໒໐:໑–໑໖ |
| – ວ່າດ້ວຍລູກຊາຍສອງຄົນ | ບົດ ໒໑:໒໘–໓໒ |
| – ວ່າດ້ວຍການແຕ່ງດອງ | ບົດ ໒໒:໑–໑໔ |
| – ວ່າດ້ວຍຄົນໃຊ້ສອງຄົນ | ບົດ ໒໔:໔໕–໕໑ |

– ວ່າດ້ວຍສາວພົມຈາຣີສຶບຄົນ ບົດ ໒໔:໑–໑໓

– ວ່າດ້ວຍຄົນຮັບເງິນ ບົດ ໒໔:໑໔–໓໐

໓. ການອິດທິຣິດ ໓ ເຣື້ອງຄື:

– ວ່າດ້ວຍຄົນຕາບອດສອງຄົນເຫັນຮຸ່ງ ບົດ ໙:໒໗–໓໑

– ວ່າດ້ວຍຄົນປາກກືກ ປາກເປັ້ນ ບົດ ໙:໓໒–໓໔

– ວ່າດ້ວຍເງິນຢູ່ໃນປາກປາ ບົດ ໑໗:໒໔–໒໗

ຄຳພະຍາກອນໃນພຣະຄັມພີເດີມໄດ້ສຳເຣັດໃນພຣະເຢຊູ

| | |
|---|---|
| ເຣື່ອງຄວາມອັສຈັນໃນການປະສູດ | ເອຊາອີ ໗:໑໔ |
| | ມັດທາຍ ໑:໒໒–໒໓ |
| ວ່າດ້ວຍການປະສູດລູກໃນເມືອງເບັດເລເຮັມ | ມີເກ ໕:໒ |
| | ມັດທາຍ ໒:໕–໖ |
| ເຣື່ອງໜີໄປປະເທດເອຢິບ | ໂອເຊ ໑໑:໑ |
| | ມັດທາຍ ໒:໑໕ |
| ວ່າດ້ວຍກະສັດສັ່ງໃຫ້ຂ້າເດັກນ້ອຍ | ເຢເຣມີ ໓໑:໑໕ |
| | ມັດທາຍ ໒:໑໗–໑໘ |
| ພຣະອົງຊົງປະທັບຢູ່ເມືອງກາເປນາອູມ | ເອຊາອີ ໘:໒໓ |
| | ມັດທາຍ ໔:໑໓–໑໖ |
| ພຣະອົງບັນດານໃຫ້ຄົນດີພຍາດ | ເອຊາອີ ໕໓:໔ |
| | ມັດທາຍ ໘:໑໗ |

| | |
|---|---|
| ພຣະອົງຊົງເຮັດແນວໃດໃນວັນຊະບາໂຕ | ເອຊາອີ ໔໒:໑-໔<br>ມັດທາຍ ໑໒:໑໘-໒໐ |
| ພຣະອົງຊົງສອນດ້ວຍຄຳອຸປມາ | ເອຊາອີ ໖:໙-໑໐<br>ມັດທາຍ ໑໓:໑໔-<br>໑໕ |
| ວ່າດ້ວຍພວກຟາຣິຊຽນທີ່ບໍ່ເຊື່ອ | ເອຊາອີ ໒໙:໑໓<br>ມັດທາຍ ໑໕:໗-໙ |
| ພຣະອົງເຂົ້າໄປໃນເມືອງເຢຣູຊາເລັມ | ຊາກາລີ ໙:໙<br>ມັດທາຍ ໒໑:໔-໕ |
| ການທໍຣະມານພຣະເຢຊູ | ເອຊາອີ ໕໓:໗<br>ມັດທາຍ ໒໖:໒໔,<br>໕໔,໕໖ |
| ວ່າດ້ວຍຜູ້ລ້ຽງທີ່ຖືກຕີ | ຊາກາລີ ໑໓:໗<br>ມັດທາຍ ໒໖:໓໑ |
| ວ່າດ້ວຍເງິນຄ່າຫົວພຣະເຢຊູ | ຊາກາລີ ໑໑:໑໓<br>ມັດທາຍ ໒໗:໙-໑໐ |
| ວ່າດ້ວຍເຂົາຈະເອົາເສື້ອຜ້າແບ່ງປັນກັນ | ຄຳເພງ ໒໒:໑໘<br>ມັດທາຍ ໒໗:໓໕ |
| ພຣະເຢຊູຊົງກ່າວເຖິງໄມ້ກາງແຂນ | ຄຳເພງ ໒໒:໒<br>ມັດທາຍ ໒໗:໔໖ |

ວ່າດ້ວຍອຸໂມງຄົນຮັ່ງມີ — ເອຊາອີ ໕໓:໙
ມັດທາຍ ໒໗:໕໗

## ຄວາມອັສຈັນທີ່ຍິ່ງໃຫຍ່

໑. ໃນເວລາພຣະເຢຊູຊົງປະສູດ — ບົດ ໒

໒. ໃນເວລາພຣະເຢຊູຊົງຖືກທໍຣະມານ — ບົດ ໒໗:໔໔

## ການແບ່ງເປັນພາກ

### ພາກທີ ໑ ວ່າດ້ວຍເຣື່ອງຕໍ່ໄປນີ້ — ບົດ ໑ ເຖິງ ໔:໑໑

ວ່າດ້ວຍເຊື້ອວົງຂອງພຣະເຢຊູ — ບົດ ໑:໑–໑໗
ເຣື່ອງກຳເນີດແລະເມື່ອຍັງເຍົາ(ໜຸ່ມ) — ບົດ ໑:໑໘–໒:໒໓
ຜູ້ຈັດແຈ່ງທາງໃຫ້ພຣະເຢຊູ — ບົດ ໓:໑–໑໒
ພຣະເຢຊູຊົງຮັບສິນບັບເຕມາ — ບົດ ໓:໑໓–໑໗
ພຣະເຢຊູຊົງຖືກທົດລອງ — ບົດ ໔:໑-໑໑

### ພາກທີ ໒ — ບົດ ໔:໑໒–໒໕

ພວກສາວົກເດີມຂອງພຣະເຢຊູ — ບົດ ໔:໑໘-໒໒
ຄຳສັ່ງສອນຂອງພຣະເຢຊູ — ບົດ ໕–໗
ການອິດທິຣິດຂອງພຣະເຢຊູ — ບົດ ໘–໙
ພວກສາວົກຂອງພຣະເຢຊູຮັບໃຊ້ — ບົດ ໑໐–໑໑:໑
ຄຳສັ່ງສອນຂອງພຣະເຢຊູ — ບົດ ໑໑:໒໐–໑໒:໕໐
ຄຳອຸປມາກ່ຽວກັບຟ້າສວັນ — ບົດ ໑໓:໑-໕໒

| | |
|---|---|
| ການຂັດຂວາງຕໍ່ອານາຈັກ | ບົດ ໑໓:໕໓–໑໖:໑໒ |
| ພຣະອົງຊົງສະແດງຕົນຕໍ່ພວກສາວົກ | ໑໖:໑໓–໑໗:໒໗ |
| ພຣະອົງຊົງເຝິກສອນພວກສາວົກ | ໑໘–໒໐ |
| ພຣະເຢຊູຊົງເຂົ້າກຸງເຢຣູຊາເລັມ | ໒໑:໑–໑໗ |
| ການບໍ່ຍອມຮັບຕ້ອນພຣະເຢຊູ | ໒໑:໑໘–໒໒:໔໖ |
| ພຣະເຢຊູຊົງຕິຕຽນພວກຟາຣິຊຽນ | ໒໓ |
| ຄຳທຳນວາຍຂອງພຣະເຢຊູ | ໒໔–໒໕ |

## ພາກທີ ໓ ການຖວາຍຕົນຂອງພຣະເຢຊູ

ບົດ ໒໖-໒໘

| | |
|---|---|
| ຖືກທໍຣະມານແລະສິ້ນພຣະຊົນ | ໒໖–໒໗ |
| ໄຊຊະນະຂອງພຣະເຢຊູ | ໒໘ |

## ວ່າດ້ວຍອານາຈັກແຫ່ງຟ້າສວັນ

໑. ເຮົາເຫັນວ່າ ຄຳເທສນາຂອງພຣະອົງໄດ້ກ່ຽວກັບເຣື່ອງຟ້າສວັນທຸກຂໍ້ ດັ່ງພຣະອົງຊົງສັ່ງວ່າ "ຈົ່ງປະໃຈເກົ່າເອົາໃຈໃໝ່ເສັຍ ເພາະອານາຈັກແຫ່ງຟ້າສວັນໄດ້ຂຍັບເຂົ້າມາໃກ້ແລ້ວ" (໔:໑໗) ທຸກ ໆ ບ່ອນທີ່ພຣະອົງຊົງເທສນາກໍປາກົດເປັນເຣື່ອງຟ້າສວັນ ແລະພຣະອົງຊົງສັ່ງໃຫ້ພວກສາວົກ

ໄປປະກາດວ່າ ອານາຈັກແຫ່ງຟ້າສວັນຫຍັບເຂົ້າມາໃກ້ແລ້ວ.

໘. ໃນສໄມບູຮານນັ້ນ ພວກອິສຣາເອັນບໍ່ມີກະສັດປົກຄອງ ພວກເຂົາຖືພຣະເຈົ້າເປັນຫົວໜ້າ ແລະເຊື່ອຖ້ອຍຟັງຄວາມພຣະເຈົ້າທຸກຢ່າງ ຕໍ່ມາພວກເຂົາຢາກໃຫ້ມີກະສັດປົກຄອງບ້ານເມືອງ ພຣະເຈົ້າກໍ່ຊົງປະທານໃຫ້ຕາມຄວາມປະສົງນັ້ນ ຄືພຣະອົງຊົງສັນຍາໄວ້ກັບພວກອິສຣາເອັນວ່າຈະຊົງປະທານພຣະມະຫາກະສັດຜູ້ຍິ່ງໃຫຍ່ແກ່ພວກເຂົາ ພຣະມະຫາກະສັດດັ່ງກ່າວນັ້ນຄືພຣະເຢຊູຫລືພຣະເມຊີອາ ຜູ້ທີ່ພວກເຂົາຄອງຫານັ້ນ ແຕ່ພວກຢູດາບໍ່ຍອມຮັບວ່າພຣະເຢຊູເປັນພຣະເມຊີອາຂອງພວກເຂົາ ເພາະພວກເຂົາຄິດວ່າ ພຣະເມຊີອາທີ່ພວກເຂົາຄອງຫານັ້ນຄືຜູ້ທີ່ຈະສະເດັດມາຊ່ອຍໃຫ້ພົ້ນຈາກອຳນາດຂອງຊາວໂຣມ ສ່ວນພຣະເຢຊູຈິ່ງຊົງສັ່ງສອນສເມີວ່າອານາຈັກຂອງພຣະເຈົ້າຈະບໍ່ແມ່ນທາງນັ້ນ ແຕ່ແມ່ນທາງຈິດວິນຍານ ທີ່ປະກອບດ້ວຍ ຄວາມຊອບທັມ ຄວາມສຸກສຳຣານແລະຄວາມຍິນດີ

໙. "ອານາຈັກແຫ່ງຟ້າສວັນ" ຫ.ລື "ອານາຈັກຂອງພຣະເຈົ້າ" ໄດ້ປາກົດພື້ນໃນສາມຣະຍະຄື:

ກ. ໃນຄາວຂອງພຣະເຢຊູ ອານາຈັກຂອງພຣະເຈົ້າໄດ້ຕັ້ງຢູ່ໃນທ່າມກາງພວກອິສຣາເອັນ ຄືພຣະມະຫາ-

ກະສັດກໍສຖິດຢູ່ນຳພວກເຂົານັ້ນ ແຕ່ພວກເຂົາຫາກບໍ່ຍອມຮັບ ໑໘:໒໗

໒. ໃນຄາວຄຣິສຕະຈັກ ອານາຈັກກໍຕັ້ງຢູ່ໃນດ້ານຈິດວິນຍານໂດຍຕາບໍ່ເຫັນ ເພາະພຣະມະຫາກະສັດປະທັບຢູ່ຟ້າສວັນ ໖:໓໓, ໂຣມ ໑໔:໑໗

໓. ເວລາພຣະມະຫາກະສັດຊົງກັບສະເດັດມາໃນພຣະຣັສມີ ໃນເວລານັ້ນພຣະອົງຈະຊົງຕັ້ງອານາຈັກໄວ້ເປັນເດັດຂາດ ທີ່ຕາເຫັນໄດ້ ໒໔:໓໐ ຄຳປາກົດ ໑໑:໑໕; ໑໙:໖